ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ | ເລກທີ 3671/ກສອ

ກົມສ່ວຍສາອາກອນ | ນະຄອນຫລວງວຽງຈັນ, ວັນທີ 12 OCT 2021

# ຄຳແນະນຳການປະຕິບັດພັນທະອາກອນ
# (ສຳລັບວິສາຫະກິດທີ່ເຂົ້າລະບົບອາກອນມູນຄ່າເພີ່ມ)

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍອາກອນຊົມໃຊ້ ສະບັບເລກທີ 68/ສພຊ, ລົງວັນທີ 19 ມິຖຸນາ 2019;

ເພື່ອເຮັດໃຫ້ວິສາຫະກິດ ທີ່ສ້າງຕັ້ງຂຶ້ນໃໝ່ ຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບການປະຕິບັດພັນທະອາກອນ ຕາມກົດໝາຍກຳນົດ, ກົມສ່ວຍສາອາກອນ ແນະນຳ ດັ່ງນີ້:

1. ການເຄື່ອນໄຫວທຸລະກິດ ໃນກິດຈະການທີ່ທ່ານດຳເນີນ ຈະຖືກເສຍອາກອນປະເພດຕ່າງໆ ຕາມອັດຕາອາກອນດັ່ງລຸ່ມນີ້:
   - ອາກອນມູນຄ່າເພີ່ມ ໃນອັດຕາເຈັດສ່ວນຮ້ອຍ (7%);
   - ອາກອນຊົມໃຊ້ (ຖ້າມີ) ໃນອັດຕາ ສາມ ຫາ ເກົ້າສິບສ່ວນຮ້ອຍ (3%) – (90%);
   - ອາກອນກຳໄລ ໃນອັດຕາ:
     - ອັດຕາຊາວສ່ວນຮ້ອຍ (20%) ສຳລັບວິສາຫະກິດທີ່ດຳເນີນທຸລະກິດ;
     - ອັດຕາຊາວສອງສ່ວນຮ້ອຍ (22%) ສຳລັບວິສາຫະກິດທີ່ຜະລິດ, ນຳເຂົ້າ ແລະ ຂາຍຜະລິດຕະພັນຢາສູບ ຊຶ່ງໃນນີ້ (2%) ຕ້ອງໄດ້ມອບເຂົ້າກອງທຶນຄວບຄຸມຢາສູບ ຕາມກົດໝາຍວ່າດ້ວຍການຄວບຄຸມຢາສູບ;
     - ອັດຕາຫ້າສ່ວນຮ້ອຍ (5%) ສຳລັບການດຳເນີນທຸລະກິດທີ່ຕິດພັນກັບການພັດທະນາຊັບພະຍາກອນມະນຸດ ເປັນຕົ້ນ ໂຮງຮຽນ, ສູນຝຶກອົບຮົມ, ການຄົ້ນຄ້ວານະວັດຕະກຳ ແລະ ກິດຈະການສຶກສາອື່ນ ແລະ ການດຳເນີນທຸລະກິດທີ່ຕິດພັນກັບການສ້າງໂຮງໝໍທັນສະໄໝ, ໂຮງງານຜະລິດຢາ, ແລະ ອຸປະກອນທາງການແພດ, ການຜະລິດ ແລະ ປົ່ນປົວດ້ວຍຢາພື້ນເມືອງ ພາຍຫລັງສິ້ນສຸດໄລຍະຍົກເວັ້ນອາກອນກຳໄລ ຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍສົ່ງເສີມການລົງທຶນ;
     - ອັດຕາເຈັດສ່ວນຮ້ອຍ (7%) ສຳລັບການດຳເນີນທຸລະກິດທີ່ນຳໃຊ້ເຕັກໂນໂລຊີທີ່ໄດ້ຈາກນະວັດຕະກຳ, ເປັນມິດຕໍ່ສິ່ງແວດລ້ອມ, ປະຢັດຊັບພະຍາກອນທຳມະຊາດ ແລະ ພະລັງງານສະອາດ ເຂົ້າໃນການຜະລິດ ພາຍຫລັງສິ້ນສຸດໄລຍະຍົກເວັ້ນອາກອນກຳໄລ ຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍສົ່ງເສີມການລົງທຶນ;
     - ອັດຕາສິບສາມສ່ວນຮ້ອຍ (13%) ສຳລັບບໍລິສັດທີ່ຈົດທະບຽນໃນຕະຫລາດຫລັກຊັບເປັນໄລຍະເວລາ ສີ່ປີ ນັບແຕ່ວັນຈົດທະບຽນເປັນຕົ້ນໄປ. ຫລັງຈາກນັ້ນໃຫ້ປະຕິບັດອັດຕາອາກອນກຳໄລຊາວສ່ວນຮ້ອຍ (20%) ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້;

- ສໍາລັບວິສາຫະກິດທີ່ຖືບັນຊີບໍ່ຖືກຕ້ອງ ຫລື ບໍ່ຄົບຖ້ວນ ແລະ ຜູ້ບໍ່ມີພູມລໍາເນົາ ທີ່ບໍ່ສ້າງຕັ້ງວິສາຫະກິດຢູ່ ສປປລາວ ໃຫ້ນໍາໃຊ້ອັດຕາອາກອນກໍາໄລຊາວສ່ວນຮ້ອຍ (20%) ຕາມມາດຕາ 15 ຂອງກົດໝາຍວ່າດ້ວຍ ອາກອນລາຍໄດ້;

- ອາກອນລາຍໄດ້ຈາກເງິນດືອນ ຫຼື ຄ່າແຮງງານ ແລະ ຜົນປະໂຫຍດອື່ນທີ່ເປັນເງິນ ຫຼື ວັດຖຸ ໃນອັດຕາທະວີ ຄູນ ແຕ່ 0% - 25%;
- ອາກອນລາຍໄດ້ຈາກການຂາຍຮຸ້ນ ຫຼື ໂອນຮຸ້ນຂອງຕົນ ຫຼື ຂາຮຸ້ນ ໃຫ້ແກ່ບຸກຄົນ, ນິຕິບຸກຄົນອື່ນ ໃນອັດຕາ 2% ຂອງລາຍໄດ້ທັງໝົດ (ກໍລະນີມີການຂາຍຮຸ້ນ ຫຼື ໂອນຮຸ້ນ);
- ອາກອນລາຍໄດ້ຈາກຊັບສິນທາງປັນຍາ ເຊັ່ນ: ລິຂະສິດ, ສິດທິບັດ, ເຄື່ອງໝາຍການຄ້າ ຫຼື ສິດອື່ນ ໃນອັດຕາ 5% ຂອງລາຍໄດ້ທັງໝົດ (ກໍລະນີບໍລິສັດມີລາຍໄດ້ດັ່ງກ່າວນີ້);
- ອາກອນລາຍໄດ້ຈາກເງິນປັນຜົນກໍາໄລ ຫຼື ຜົນປະໂຫຍດອື່ນໃຫ້ແກ່ຂາຮຸ້ນ ຫຼື ຜູ້ຖືຮຸ້ນ ໃນອັດຕາ 10% ຂອງ ລາຍໄດ້ທັງໝົດ (ກໍລະນີມີການແບ່ງປັນຜົນກໍາໄລ ຫລື ຜົນປະໂຫຍດໃຫ້ແກ່ຂາຮຸ້ນ);
- ອາກອນລາຍໄດ້ຈາກດອກເບ້ຍເງິນໃຫ້ກູ້ຢືມທີ່ບໍ່ຜ່ານລະບົບທະນາຄານ ແລະ ສະຖາບັນການເງິນ, ລາຍໄດ້ ຈາກການຄໍ້າປະກັນຕາມສັນຍາ ຫຼື ຂໍ້ຜູກພັນອື່ນ ໃນອັດຕາ 10% ຂອງລາຍໄດ້ທັງໝົດ.

2. ຕ້ອງນໍາໃຊ້ເລກປະຈໍາຕົວຜູ້ເສຍອາກອນ(TIN) ໃສ່ທຸກເອກະສານທີ່ພົວພັນກັບການເຄື່ອນໄຫວທຸລະກິດ;
3. ຕ້ອງນໍາໃຊ້ໃບເກັບເງິນ ຕາມແບບໃບເກັບເງິນອາກອນມູນຄ່າເພີ່ມ ທີ່ໄດ້ກໍານົດໄວ້ໃນດໍາລັດວ່າດ້ວຍໃບເກັບເງິນ ໂດຍຕ້ອງຂໍອະນຸຍາດຈາກຂະແໜງສ່ວຍສາອາກອນ ແລະ ຕ້ອງອອກໃບເກັບເງິນທຸກໆຄັ້ງທີ່ມີການສະໜອງ ສິນຄ້າ ແລະ ການບໍລິການ;
4. ຕ້ອງຖືບັນຊີຢ່າງຖືກຕ້ອງ, ຄົບຖ້ວນ ຕາມລະບົບບັນຊີ ທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍການບັນຊີ ສປປ ລາວ;
5. ຕ້ອງປະຕິບັດລະບົບອາກອນມູນຄ່າເພີ່ມຢ່າງຄົບຊຸດ ຕາມທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ;
6. ມີໜ້າທີ່ຄິດໄລ່ ແລະ ຫັກອາກອນລາຍໄດ້ຈາກເງິນເດືອນຂອງພະນັກງານ-ກໍາມະກອນ ເພື່ອແຈ້ງມອບເຂົ້າງົບ ປະມານແຫ່ງລັດ ຕາມກໍານົດເວລາທີ່ໄດ້ລະບຸໄວ້ໃນຂໍ້ 9 ຂອງຄໍາແນະນໍາສະບັບນີ້;
7. ຕ້ອງຄິດໄລ່ ແລະ ຫັກ ອາກອນມູນຄ່າເພີ່ມ ແລະ ອາກອນກໍາໄລແບບບັງຄັບ ຈາກການຊື້ການບໍລິການ ຈາກຜູ້ບໍ່ ມີພູມລໍາເນົາ ແລະ ບໍ່ໄດ້ສ້າງວິສາຫະກິດຕາມກົດໝາຍຂອງ ສປປ ລາວ ຫຼື ອາກອນລາຍໄດ້(ຖ້າມີ) ເພື່ອແຈ້ງ ມອບເຂົ້າງົບປະມານ ຕາມກໍານົດເວລາທີ່ໄດ້ລະບຸໄວ້ໃນຂໍ້ 8 ຂອງຄໍາແນະນໍາສະບັບນີ້, ກໍລະນີ ບໍ່ຄິດໄລ່ ແລະ ຫັກ ອາກອນມູນຄ່າເພີ່ມ ແລະ ອາກອນກໍາໄລແບບບັງຄັບ ຂອງຜູ້ບໍ່ມີພູມລໍາເນົາໄວ້ເພື່ອມອບໃຫ້ລັດ ແມ່ນຕ້ອງ ໄດ້ຮັບຜິດຊອບດ້ວຍຕົນເອງ;
8. ຕ້ອງແຈ້ງມອບອາກອນປະເພດຕ່າງໆ ຢ່າງເປັນປົກກະຕິ ຕາມກໍານົດເວລາ ດັ່ງລຸ່ມນີ້:
   - ອາກອນມູນຄ່າເພີ່ມ, ອາກອນຊົມໃຊ້, ອາກອນລາຍໄດ້ຈາກເງິນເດືອນ ໃຫ້ແຈ້ງມອບເປັນເດືອນ ບໍ່ໃຫ້ກາຍວັນ ທີ 20 ຂອງເດືອນຖັດໄປ;
   - ອາກອນກໍາໄລ ໃຫ້ແຈ້ງມອບ 2 ຄັ້ງຕໍ່ປີ, ຄັ້ງທີ 1 ບໍ່ໃຫ້ກາຍວັນທີ 20 ກໍລະກົດ ຂອງປີ ແລະ ຄັ້ງທີ 2 ບໍ່ໃຫ້ ກາຍວັນທີ 20 ມັງກອນ ຂອງປີຖັດໄປ;
   - ອາກອນລາຍໄດ້ຈາກ ການຂາຍຮຸ້ນ, ຊັບສິນທາງປັນຍາ, ເງິນປັນຜົນກໍາໄລ, ດອກເບ້ຍເງິນໃຫ້ກູ້ຢືມ ແລະ ການ ຄໍ້າປະກັນຕາມສັນຍາ ຫຼື ຂໍ້ຜູກພັນອື່ນ ໃຫ້ແຈ້ງມອບເປັນຄັ້ງ ພາຍໃນກໍານົດເວລາ 15 ວັນ, ນັບແຕ່ວັນທີ່ໄດ້ຄິດ ໄລ່ຫັກອາກອນໄວ້ ຫຼື ວັນທີ່ມີລາຍໄດ້;
   - ອາກອນມູນຄ່າເພີ່ມ ແລະ ອາກອນກໍາໄລແບບບັງຄັບ ທີ່ຫັກໄວ້ຈາກຜູ້ບໍ່ມີພູມລໍາເນົາ ໃຫ້ແຈ້ງມອບເປັນຄັ້ງ ພາຍໃນກໍານົດເວລາ 15 ວັນ ນັບແຕ່ວັນທີ່ໄດ້ຊໍາລະເງິນໃຫ້ແກ່ຜູ້ສະໜອງທີ່ບໍ່ມີພູມລໍາເນົາ;

9. ແຈ້ງມອບອາກອນ ຜ່ານລະບົບ TaxRIS ດ້ວຍຕົນເອງແບບອອນລາຍຜ່ານທາງ: http://taxservice.mof.gov.la/websquare/websquare.do ແລະ ຊໍາລະຜ່ານລະບົບ Easy tax ຕາມຊ່ອງທາງຕ່າງໆຂອງທະນາຄານ ເຊັ່ນ: BCEL one, LDB Trust, APB Quick, LVB DigiBank, VietinBank Lao;

10. ການລະເມີດ ຫຼື ບໍ່ປະຕິບັດຕາມຄໍາແນະນໍາ ຂໍ້ 2, 3, 4, 5, 6, 7, 8 ແລະ 9 ຂ້າງເທິງ ຈະຖືກປະຕິບັດມາດຕະການປັບໃໝ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 60, 61 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ມາດຕາ 73 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ມາດຕາ 38 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ສະບັບເລກທີ 68/ສພຊ ແລະ ມາດຕະການປັບໃໝ ທີ່ໄດ້ກໍານົດໄວ້ໃນດໍາລັດວ່າດ້ວຍໃບເກັບເງິນ;

11. ຄໍາແນະນໍາສະບັບນີ້ ເປັນການແນະນໍາບາງຈຸດທີ່ສໍາຄັນ ທີ່ໄດ້ກໍານົດໄວ້ໃນບັນດາກົດໝາຍຂອງຂົງເຂດສ່ວຍສາອາກອນ ໃຫ້ຜູ້ເລີ່ມຕົ້ນທຸລະກິດ, ຖ້າຫາກທ່ານຍັງມີຄວາມຕ້ອງການຮຽນຮູ້ເພີ່ມເຕີມ, ສະເໜີທ່ານເຂົ້າໄປຂໍຄໍາແນະນໍາ ໄດ້ທີ່ຫ້ອງການສ່ວຍສາອາກອນ ບ່ອນທີ່ຢູ່ໃກ້ທ່ານທີ່ສຸດ.

ດັ່ງນັ້ນ, ຈຶ່ງອອກຄໍາແນະນໍາສະບັບນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ຫົວໜ່ວຍທຸລະກິດ**

ຂ້າພະເຈົ້າ ໄດ້ຮັບຮູ້ ແລະ ເຂົ້າໃຈ ຕາມຄໍາແນະນໍາ
ສະບັບນີ້ທຸກປະການ ແລະ ຈະປະຕິບັດຢ່າງເຂັ້ມງວດ.

ຊື່ວິສາຫະກິດ:.............................................

ເລກປະຈໍາຕົວຜູ້ເສຍອາກອນ:............................

ລົງລາຍເຊັນ:..............................................

ຊື່ ແລະ ນາມສະກຸນ:......................................

ຮກ. **ຫົວໜ້າກົມສ່ວຍສາອາກອນ**

**ທ່ານ ລະລິດ ຮາຊະພົມ**

**ທ່ານສາມາດດາວໂຫລດກົດໝາຍ, ນິຕິກໍາຕ່າງໆ ແລະ ວິທີການແຈ້ງ-ມອບອາກອນ**
**ຕາມເວັບໄຊ: taxservice.mof.gov.la ຫລືຕາມ QR Code ໃນຂ້າງເທິງນີ້**